ຂໍ້ມູນຕິດຕໍ່:
Contact Information:

- **ກົມຊັບພະຍາກອນນ້ຳ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສປປ ລາວ**
  ຖະໜົນນາໄຮ່ດ່ຽວ, ເມືອງຈັນທະບູລີ, ຕູ້ ປ.ນ: 7864, ນະຄອນຫຼວງວຽງຈັນ, ສປປ ລາວ.
  ໂທ: (856-21) 241 744, ແຟກ: (856-21) 218 737

  Department of Water Resources (DWR), Ministry of Natural Resources and Environment
  Nahaidiew Rd., Chantabuly District, P.O. Box 7864, Vientiane Capital, Lao PDR
  Tel: (856-21) 241 744, Fax: (856-21) 218 737
  http://www.dwr.monre.gov.la

- **ກົມຄວາມຮ່ວມມືລະຫວ່າງປະເທດ (ໄທກາ), ກະຊວງການຕ່າງປະເທດ**

  Thailand International Cooperation Agency (TICA), Ministry of Foreign Affairs
  The Government Complex, Building B (South Zone), 8th Fl., Chaengwattana Rd., Laksi, Bangkok 10210, Thailand
  Tel: (66)2 203 5000 ext. 41001, 41006
  http://www.tica.thaigov.net

- **ອົງກອນຄວາມຮ່ວມມືລະຫວ່າງປະເທດຂອງເຢຍລະມັນ ປະຈຳປະເທດໄທ (ຈີໄອແຊັດ)**
  ແຜນຄວາມຮ່ວມມືສາມຝ່າຍໄທ - ເຢຍລະມັນ

  Deutsche Gesellschaft für Internationale Zusammenarbeit (GIZ) GmbH
  German International Cooperation
  Thai-German Trilateral Cooperation Programme
  GIZ Office Bangkok 193/63 Lake Rajada Office Complex, 16th Fl.,
  New Ratchadapisek-Rama IV Rd., Klongtoey, Bangkok 10110, Thailand
  Tel: (66)2 661 9273, Fax: (66)2 661 9281
  http://www.thai-german-cooperation.info

Lao-Thai-German Trilateral Cooperation

ໂຄງການການຄຸ້ມຄອງອ່າງແມ່ນ້ຳຍ່ອຍ ນ້ຳຊອງ
(ການຮ່ວມມືສາມຝ່າຍ ລາວ-ໄທ-ເຢຍລະມັນ)

Nam Xong Sub-River Basin Management Project
(Lao-Thai-German Trilateral Cooperation)

ຈຸດປະສົງລວມ: ເພື່ອປັບປຸງການຄຸ້ມຄອງຊັບພະຍາກອນນ້ຳ ໃນອ່າງແມ່ນ້ຳຍ່ອຍ ນ້ຳຊອງ ໂດຍຜ່ານຂະບວນການປົກປັກຮັກສາຄຸນນະພາບນ້ຳ ແລະ ວິທີການແກ້ໄຂບັນຫາທາງດ້ານວິຊາການ.

Overall objective: To improve water resources management in Nam Xong sub-river basin through practical water protection regulation and technical solutions.

ໄລຍະເວລາຈັດຕັ້ງປະຕິບັດ: ເດືອນມີນາ 2012 ເຖິງ ເດືອນກຸມພາ 2014.
ທີ່ຕັ້ງໂຄງການ: ເມືອງວັງວຽງ, ເມືອງກາສີ ແລະ ເມືອງຫີນເຫີບ, ແຂວງວຽງຈັນ ສປປ ລາວ.

Implementing period: March 2012 - February 2014
Project location: Selected area in Vang Vieng, Kasy and Hinhueb district, Vientiane Province, Lao PDR

ກຸ່ມເປົ້າໝາຍ:
1. ໜ່ວຍງານວິຊາການອ່າງແມ່ນ້ຳຍ່ອຍ ນ້ຳຊອງ ແລະ ທີມງານປະສານງານ.
2. ອົງການປົກຄອງທ້ອງຖິ່ນທີ່ມີສ່ວນກ່ຽວຂ້ອງໃນການຄຸ້ມຄອງຄຸນນະພາບນ້ຳ.
3. ຊຸມຊົນຜູ້ນຳໃຊ້ນ້ຳ, ຊາວນາ, ຊາວປະມົງ, ຜູ້ບໍລິການທ່ອງທ່ຽວ ແລະ ຄົວເຮືອນທີ່ຢູ່ໃນອ່າງແມ່ນ້ຳຍ່ອຍ ນ້ຳຊອງ.

Target groups:
1. Nam Xong Task Force (NXTF) and coordinating team
2. Local authorities involving in Nam Xong water quality protection
3. Water users in Nam Xong sub-river basin eg. farmers, fishermen and household

ອົງການ ຈັດຕັ້ງປະຕິບັດ:
ສປປ ລາວ: ກົມຊັບພະຍາກອນນ້ຳ, ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງກາສີ, ວັງວຽງ ແລະ ຫີນເຫີບ.
ປະເທດໄທ: ກົມຄວາມຮ່ວມມືລະຫວ່າງປະເທດ (ໄທກາ) ແລະກົມຊັບພະຍາກອນນ້ຳ.
ເຢຍລະມັນ: ຈີໄອແຊັດ ປະຈຳປະເທດລາວ ແລະ ຈີໄອແຊັດ ປະຈຳປະເທດໄທ.

Implementing Agencies:
Lao PDR: Department of Water Resources, District Office of Natural Resources and Environment (DoNRE) in Kasy, Vang Vieng and Hinhueb district
Thailand: TICA and Department of Water Resources
Germany: GIZ Laos and GIZ Thailand

ຮູບແບບຜົນໄດ້ຮັບຂອງໂຄງການ
Project Results Model

ຜົນກະທົບ Impacts

ການຄຸ້ມຄອງຊັບພະຍາກອນນ້ຳ ໃນອ່າງແມ່ນ້ຳຍ່ອຍນ້ຳຊອງ ໄດ້ຮັບການປັບປຸງ ໂດຍຜ່ານຂະບວນການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານທ້ອງຖິ່ນ ແລະ ຕົວແທນຈາກຊຸມຊົນ ພ້ອມທັງສ້າງລະບຽບປົກປັກຮັກສາຄຸນນະພາບນ້ຳ ແລະ ວິທີການແກ້ໄຂບັນຫາທາງດ້ານວິຊາການ ໂດຍນຳໃຊ້ວິທີການຈາກລຸ່ມຂຶ້ນເທິງ ສຸມໃສ່ການສ້າງຈິດສຳນຶກ ແລະ ການມີສ່ວນຮ່ວມຂອງທ້ອງຖິ່ນ.

Improved water resources management in Nam Xong sub-river basin through the strengthening of local authorities and community representatives and practical water protection regulations and technical solutions with bottom-up approach focusing on awareness raising and local participation.

ຜົນໄດ້ຮັບ Benefits

ໜ່ວຍງານວິຊາການອ່າງແມ່ນ້ຳຍ່ອຍນ້ຳຊອງ ໄດ້ຮັບການສ້າງຕັ້ງ ຊຶ່ງສາມາດສົ່ງເສີມແນວຄວາມຄິດໃນການຄຸ້ມຄອງອ່າງແມ່ນ້ຳ ໃນອ່າງແມ່ນ້ຳຍ່ອຍນ້ຳຊອງ ແລະ ເຮັດໜ້າທີ່ໃນການສົ່ງເສີມການສ້າງຕັ້ງອົງກອນອ່າງແມ່ນ້ຳຍ່ອຍນ້ຳຊອງ ໃນອະນາຄົດ ໂດຍຮ່ວມມືກັບຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງໃນພື້ນທີ.

NXTF has been set up and is capable to promote river basin management concept and take up the role in promoting Nam Xong sub-river basin organization establishment in the future, in cooperation with relevant stakeholders in the area.

ກົດລະບຽບຄຸ້ມຄອງຄຸນນະພາບນ້ຳ ຖືກປະກາດໃຊ້ໃນພື້ນທີ່ ແລະ ມີການນຳໃຊ້ປະຕິບັດຢ່າງເໝາະສົມ ພ້ອມທັງມີການສົ່ງເສີມວິທີແກ້ໄຂບັນຫາທາງດ້ານວິຊາການ ໃຫ້ກັບກຸ່ມຜູ້ໃຊ້ນ້ຳໃນພື້ນທີ່ເປົ້າໝາຍ ອັນເປັນແນວທາງໃນການສືບຕໍ່ ກິດຈະກຳໃນການດຳລົງຊີວິດຂອງເຂົາເຈົ້າ ໂດຍສອດຄອງກັບກົດລະບຽບອ່າງແມ່ນ້ຳຍ່ອຍ ນ້ຳຊອງ.

Practical water protection regulations are in place and effectively implemented in the target areas. Appropriate technical solutions are promoted to the water users in the target areas as options for them to continue their livelihood activities while still complying with the new regulation in Nam Xong sub-river basin.

ໝາກຜົນ Outputs

ໜ່ວຍງານວິຊາການອ່າງແມ່ນ້ຳຍ່ອຍນ້ຳຊອງ ປະກອບດ້ວຍອົງການປົກຄອງທ້ອງຖິ່ນ ແລະ ຕົວແທນຈາກຊຸມຊົນໃນເຂດອ່າງແມ່ນ້ຳຍ່ອຍນ້ຳຊອງ ທີ່ໄດ້ຮັບການສ້າງຄວາມອາດສາມາດ ໃນການຄຸ້ມຄອງອ່າງແມ່ນ້ຳແບບປະສົມປະສານ.

NXTF consisting of local authorities and community representatives in Nam Xong area with strengthened capacity in integrated river basin management.

ຮ່າງຂໍ້ຕົກລົງ ແລະ ພາລະບົດບາດ ຂອງ ລະບົບ ການຈັດຕັ້ງທີ່ເໝາະສົມໃນການຄຸ້ມຄອງອ່າງແມ່ນ້ຳຍ່ອຍນ້ຳຊອງ.

Draft order and terms of reference for an appropriate institutional system for Nam Xong sub-river basin organization.

ຂໍ້ມູນສະພາບລວມຄຸນນະພາບນ້ຳໃນອ່າງແມ່ນ້ຳຍ່ອຍ ນ້ຳຊອງ ສະບັບປັບປຸງ.

Updated water quality profile in Nam Xong sub-river basin.

ກົດລະບຽບການຄຸ້ມຄອງຄຸນນະພາບນ້ຳ ແລະ ວິທີແກ້ໄຂບັນຫາທາງດ້ານວິຊາການທີ່ເໝາະສົມ ສຳລັບການຄຸ້ມຄອງອ່າງແມ່ນ້ຳຍ່ອຍນ້ຳຊອງ.

A set of water quality protection regulations and technical solutions appropriate for the Nam Xong sub-river basin management.

ແນວທາງການຈັດຕັ້ງປະຕິບັດບັນດາກິດຈະກຳເສີມສ້າງຈິດສຳນຶກ ກ່ຽວກັບ ການຄຸ້ມຄອງຄຸນນະພາບນ້ຳ ເຊິ່ງສາມາດສ້າງເປັນຕົວແບບ ໃນການຂະຫຍາຍຜົນຕໍ່ໄປ.

A set of practical awareness raising activities on water quality protection which can be a model for replication.

ກິດຈະກຳ Activities

- ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງ ໃຫ້ທີມງານວິຊາການນ້ຳຊອງ ແລະ ພະນັກງານທ້ອງຖິ່ນ ທີ່ຮັບຜິດຊອບວຽກງານດ້ານການປົກປັກຮັກສາຄຸນນະພາບນ້ຳ ແລະ ການຄຸ້ມຄອງອ່າງແມ່ນ້ຳ.
- Conduct training and capacity building activities for Nam Xong Task Force (NXTF) and local authorities in charge in water quality protection and river basin management.

- ສຶກສາ ແລະ ອອກແບບ ລະບົບອົງການຈັດຕັ້ງທີ່ເໝາະສົມ ພ້ອມທັງບົດແນະນຳໃນການເຮັດວຽກຂອງອົງການຈັດຕັ້ງອ່າງແມ່ນ້ຳຍ່ອຍນ້ຳຊອງ.
- Study and design appropriate institutional system and working guideline for Nam Xong sub-river basin organiztion.

- ຝຶກອົບຮົມກ່ຽວກັບການຄຸ້ມຄອງ ແລະ ການຕິດຕາມຄຸນນະພາບນ້ຳ ໃຫ້ກັບໜ່ວຍງານວິຊາການ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ.
- ສຶກສາ ແລະ ຕິດຕາມຄຸນນະພາບນ້ຳໃນອ່າງແມ່ນ້ຳຍ່ອຍນ້ຳຊອງຢ່າງເປັນປົກກະຕິ.
- Conduct trainings on water quality protection and monitoring for NXTF and relevant agencies.
- Study and monitor Nam Xong water quality profile regularly.



- ດຳເນີນການໄປທັດສະນະສຶກສາກ່ຽວກັບການຄຸ້ມຄອງອ່າງແມ່ນ້ຳແບບປະສົມປະສານ ທີ່ປະເທດໄທ.
- ທົບທວນຄືນກ່ຽວກັບກົດລະບຽບຄຸ້ມຄອງຄຸນນະພາບນ້ຳໃນອ່າງແມ່ນ້ຳຍ່ອຍນ້ຳຊອງ ແລະ ວິທີແກ້ໄຂບັນຫາທາງດ້ານວິຊາການທີ່ເໝາະສົມ ໃນການເຜີຍແຜ່ ແລະ ຈັດຕັ້ງປະຕິບັດໃນອະນາຄົດ.
- Conduct a study visit in Thailand on integrated River Basin Management.
- Review Nam Xong water quality protection regulation and develop and test appropriate technical solutions for further dissemination and implementation.

- ດຳເນີນກິດຈະກຳປຸກຈິດສຳນຶກ ກ່ຽວກັບ ການຄຸ້ມຄອງຄຸນນະພາບນ້ຳ ໃນ 3 ບ້ານ ຕົວແບບ.
- ຈັດເວທີແລກປ່ຽນປະສົບການ ກ່ຽວກັບ ກິດຈະກຳປຸກຈິດສຳນຶກ ແລະ ການຈັດຕັ້ງປະຕິບັດ.
- Conduct tailor-made awareness raising activities on water quality protection in 3 pilot villages.
- Organize experience sharing forum on awareness raising activities implementation.